# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 12 ມີນາ 2017 (3-12-2017)

## ຄວາມຫວັງໃນຊັຍຊະນະ

ຄຳເວົ້າຫຼືຄຳຈົ່ມແນວໃດທີ່ທ່ານເຄີຍໄດ້ຍິນຈາກພໍ່ແມ່ໃນຊ່ວງເວລາທີ່ທ່ານກຳລັງເຕີບໃຫຍ່.

**ຈຸດສຳຄັນໃນບົດຮຽນ**: ເມື່ອພວກເຮົາມາຫາພຣະເຢຊູໃນຄວາມເຊື່ອ, ພວກເຮົາຈະພົບກັບຄວາມຫວັງ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ເມື່ອເວລາພວກເຮົາຍັງເປັນເດັກນ້ອຍ, ພວກເຮົາໄດ້ຈົດລາຍລະອຽດຂອງຄວາມຄິດຫຼືຄຳເວົ້າທີ່ພວກຈະບໍ່ເຮັດເມື່ອພວກເຮົາ "ເຕີບໂຕເປັນຜູ້ໃຫຍ່." ຕົວຢ່າງ: " ເມື່ອຂ້າພະເຈົ້າເປັນຜູ້ປົກຄອງ, ຂ້າພະເຈົ້າຈະບອກລູກຂອງຂ້າພະເຈົ້າ, " ເພາະຂ້ອຍໄດ້ເວົ້າແບບນັ້ນ." " ດັ່ງນັ້ນເມື່ອພວກເຮົາເປັນຜູ້ໃຫຍ່ແລະມີລູກ. ແລະຕລອດເວລາທີ່ຜ່ານໄປ, ພວກເຮົາເວົ້າກັບເຂົາ, " ເພາະຂ້ອຍເວົ້າແບບນັ້ນ!"

ການໝູນວຽນນີ້ອາດຈະເຮັດໃຫ້ອັບອາຍ, ແຕ່ມັນໄດ້ເນັ້ນໃຫ້ເຫັນພື້ນຖານຂອງຊີວິດ: ບາງຄົນມີອຳນາດເຮັດໃຫ້ສິ່ງໃດສິ່ງນຶ່ງເກີດຂຶ້ນພຽງແຕ່ໃຊ້ຄຳເວົ້າຊື່ໆ. ຜູ້ປົກຄອງເປັນຕົວຢ່າງທີ່ດີ. ແຕ່ພຣະເຈົ້າເປັນຕົວຢ່າງທີ່ດີທີ່ສຸດ.

ພຣະເຈົ້າຕັສ, ແລະການຊົງສ້າງກໍບັງເກີດຂຶ້ນ. ພຣະເຢຊູຕັສ, ລາຊາໂຣໄດ້ເປັນຄືນມາຈາກຕາຍ. ພຣະເຢຊູຕັສອີກຄັ້ງເປັນຕົ້ນເຫດ. ແລະຊາຍນັ້ນກໍດີພະຍາດ ເຖິງພຣະເຢຊູບໍ່ໄດ້ຢູ່ໃກ້ລາວ.

ໃຫ້ເຮົາເບິ່ງເຂົ້າໄປໃຫ້ເລິກໆໃນເຫດການທີ່ຫາກໍເກີດຂຶ້ນ. ເມື່ອເບິ່ງເຫັນຈາກເນື້ອຫາໃນພຣະທັມຕອນນີ້, ອັນໃດທີ່ເຮັດໃຫ້ພຣະເຢຊູປະທັບໃຈໃນເຣື່ອງລາວຕອນນີ້ທີ່ເປັນຄວາມເຊື່ອຂອງນາຍຮ້ອຍ: ຊາຍຜູ້ທີ່ເຊື່ອວ່າຂ້ອຍໃຊ້ທີ່ປ່ວຍຢູ່ຈະຫາຍດີຢ່າງງ່າຍດາຍພຽງແຕ່ພຣະເຢຊູຕັສໄປ. ນັ້ນຄືຄວາມຈິງໃນຄວາມເຊື່ອ; ຊຶ່ງເປັນຄວາມເຊື່ອວ່າພຣະເຢຊູສາມາດເຮັດໃນສິ່ງທີ່ພຣະອົງເວົ້າວ່າພຣະອົງສາມາດເຮັດໄດ້ແລະນັ້ນຄວນຈະໃຫ້ຄວາມຫວັງອັນຍິ່ງໃຫຍ່ກັບເຮົາ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

**ສ ິ ກສາພຣະຄັມພີ**

**1. ມັດທາຍ: 8: 5-7**

*5 ຂະນະທີ່ພຣະອົງສະເດັດເຂົ້າໄປໃນເມືອງກາເປນາອູມ ມີນາຍຮ້ອຍທະຫານຜູ້ໜຶ່ງມາອ້ອນວອນພຣະອົງ. 6 ທູນວ່າ, "ນາຍເອີຍ, ຄົນໃຊ້ຂອງຂ້ານ້ອຍເປັນເປັ້ຽນອນຢູ່ເຮືອນທົນທຸກເວດທະນາຫລາຍ." 7 ພຣະເຢຊູຊົງບອກກັບນາຍຮ້ອຍນັ້ນວ່າ, "ເຮົາຈະໄປຊ່ວຍໃຫ້ລາວດີ."*

ຈາກແນວຄວາມຄິດຂອງເຮົາ, ໃນຂໍ້ນີ້ບໍ່ໄດ້ມີສິ່ງໃດເປັນເຣື່ອງປລາດກ່ຽວກັບສິ່ງທີ່ເຮົາໄດ້ເຫັນໃນຕອນນີ້. ຜູ້ໃດຈະໄປຫາພຣະເຢຊູເພື່ອການປິ່ນປົວ? ໃນໂລກສມັຍບູຮານ, ການສົນທະນານີ້ຈະເຮັດໃຫ້ເຮົາຕົກຕະລຶງດ້ວຍຫຼາຍເຫດຜົນ:

- ຊາຍຄົນນັ້ນບໍ່ແມ່ນຄົນຢິວ ລາວເປັນຄົນໂຣມ.
- ລາວເປັນນາຍຮ້ອຍທະຫານ, ມີໜ້າທີ່ຮັບຜິດຊອບທະຫານ 80-100 ຄົນທີ່ເຄີຍຊະນະສົງຄາມຂົງເຂດນັ້ນ.

- ຕລອດເວລາ, ຄົນຢິວແລະທະຫານໂຣມແມ່ນຫລີກລ້ຽງທີ່ຈະພົບກັນ.   ເຖິງແມ່ນເຂົາບໍ່ໄດ້ເປີດເຜີຍໃຫ້ເຫັນວ່າເປັນສັດຕຣູກັນ.

ນາຍທະຫານໝົດຫວັງທີ່ຈະໄດ້ຮັບຄວາມສົນໃຈຈາກພຣະເຢຊູ. ລາວຈະເຮັດທຸກຢ່າງທີ່ຈະຊອກຫາວິທີທາງເພື່ອປິ່ນປົວຂ້ອຍໃຊ້ຂອງລາວ. ສຳລັບພຣະເຢຊູ ພຣະອົງໄດ້ໃຫ້ຄວາມສເມີພາບທີ່ຈະຂ້າມຜ່ານເຂດແດນເຊື້ອຊາດຫຼືປະຊາຊາດຖ້າເປັນເຈດຕະນາດີທີ່ຈະຊ່ວຍຄົນ. ແມ່ນແລ້ວ ຂ່າວປະເສີດໄດ້ມາເຖິງຊາວຢິວກ່ອນ, ແຕ່ພຣະເຢຊູມີເປົ້າໝາຍອັນສູງສຸດຄືພຣະອົງໄດ້ລົງມາເພື່ອໄຖ່ຄົນທົ່ວໂລກ.  ສິ່ງທີ່ປລາດໃຈໄດ້ເກີດຂຶ້ນໃນເຣື່ອງນີ້ ເມື່ອພຣະເຢຊູບອກນາຍຮ້ອຍທະຫານວ່າພຣະອົງຈະໄປທີ່ບ້ານຂອງລາວໃນວັນນັ້ນ. ຊຶ່ງເປັນເຣື່ອງທີ່ບໍ່ໜ້າເຊື່ອສຳລັບຄົນຢິວທີ່ຈະເຂົ້າໄປໃນເຮືອນຂອງຄົນຕ່າງຊາດ.  ເຖິງຢ່າງໃດກໍຕາມ, ພຣະເຢຊູບໍ່ໄດ້ມີຄວາມວິຕົກກັງວົນໃນການປາກົດຕົວ. ແທ້ຈິງ, ຫລັງຈາກນັ້ນພຣະເຢຊູໄດ້ສອນວ່າບໍ່ແມ່ນສິ່ງທີ່ເຂົ້າໄປໃນປາກນັ້ນທີ່ເຮັດໃຫ້ມະນຸດຊົ່ວມົວໝອງ ແຕ່ແມ່ນສິ່ງທີ່ອອກມາຈາກປາກນັ້ນແຫລະ, ທີ່ເຮັດໃຫ້ມະນຸດຊົ່ວມົວໝອງ" (ມັດທາຍ 15:16-20).

ພຣະເຢຊູຈະໃຫ້ກຽດແກ່ນາຍຮ້ອຍທະຫານໂດຍການໄປທີ່ເຮືອນຂອງລາວ. ຖ້າທ່ານຕ້ອງການຍາກຈະອະທິບາຍປໂຍກນຶ່ງຈາກການກະທຳຂອງພຣະອົງ.  ເບິ່ງແມ,  ໂດຍຜ່ານທາງອົງພຣະເຢຊູຄຣິດ ພຣະເຈົ້າຢາກບອກສິ່ງທີ່ໂລກທີ່ກຳລັງສິ້ນຫວັງ. "ເຮົາຈະມາທີ່ບ້ານຂອງເຈົ້າ, ແລະເຮົາຈະນຳການປິ່ນປົວແລະຄວາມຫວັງໄປກັບເຮົາ."

**2. <u>ມັດທາຍ 8: 8-9</u>:**

*8 ແຕ່ຝ່າຍນາຍຮ້ອຍຜູ້ນັ້ນໄດ້ທູນຕອບວ່າ, "ຂ້ານ້ອຍເປັນຄົນບໍ່ສົມຄວນທີ່ຈະໃຫ້ທ່ານເຂົ້າໄປລຸ່ມຫລັງຄາເຮືອນຂອງຂ້ານ້ອຍ ແຕ່ຂໍທ່ານກ່າວເທົ່ານັ້ນຄົນໃຊ້ຂອງຂ້ານ້ອຍກໍຈະດີພະຍາດ  9 ເຫດວ່າຂ້ານ້ອຍເປັນຄົນຢູ່ໃຕ້ວິນັຍທະຫານ ແລະຍັງມີທະຫານຢູ່ໃຕ້ບັງຄັບບັນຊາຂອງຂ້ານ້ອຍອີກ ຂ້ານ້ອຍສັ່ງແກ່ຄົນນັ້ນວ່າ 'ໄປ' ມັນກໍໄປ   ແລະສັ່ງຄົນນີ້ວ່າ 'ມາ' ມັນກໍມາ ແລະບອກແກ່ຄົນໃຊ້ຂອງຂ້ານ້ອຍວ່າ 'ຈົ່ງເຮັດສິ່ງນີ້' ມັນກໍເຮັດ."*

ນາຍຮ້ອຍທະຫານໄດ້ສະແດງຄວາມຮູ້ບຸນຄຸນອັນໃຫຍ່ໃນຄວາມສົນໃຈຂອງພຣະເຢຊູ, ແຕ່ລາວກັບມີບັນຫາເມື່ອພຣະເຢຊູຢາກຈະໄປບ້ານຂອງລາວ.   ແມ່ນຫຍັງຄືບັນຫາ? ນາຍທະຫານຄົນນີ້ຮູ້ວ່າເປັນຍ້ອນຫຍັງແລະລາວຮູ້ວ່າລາວເປັນຜູ້ໃດ: "ຂ້ານ້ອຍເປັນຄົນບໍ່ສົມຄວນທີ່ຈະໃຫ້ທ່ານເຂົ້າໄປລຸ່ມຫລັງຄາເຮືອນຂອງຂ້ານ້ອຍ" ລາວແນ່ໃຈຮູ້ເຖິງຄວາມບໍ່ເໝາະສົມສຳລັບຄົນຢິວແລະຜູ້ນຳທາງສາສນາຢິວ ທີ່ຈະເຂົ້າໄປໃນເຮືອນ "ບໍ່ສະອາດ" ຂອງຄົນຕ່າງຊາດ. ບາງເທື່ອລາວອາດຈະຮູ້ສຶກວ່າຕົວລາວເອງເປັນຄົນບາບ ທີ່ຢືນຢູ່ຕໍ່ໜ້າຄົນຊອບທັມຄືພຣະເຢຊູ.

ບາງເທື່ອນາຍຮ້ອຍທະຫານນັ້ນອາດມີຄວາມຮູ້ສຶກວ່າຕົວລາວເອງບໍ່ມີຄ່າ.  ລາວມີອຳນາດ, ແຕ່ມີຂອບເຂດຈຳກັດ, ແລະພຽງພໍສຳລັບຜູ້ທີ່ຮັບໃຊ້ລາວເທົ່ານັ້ນ.  ລາວເຄີຍເຫັນການໃຊ້ອຳນາດທີ່ຍິ່ງໃຫຍ່ໃນສນາມຮົບຜ່ານທາງນາຍພົນທະຫານແລະອັຍະການສານຕັດສິນສມັຍບູຮານ,  ແຕ່ຣິດອຳນາດຂອງພຣະເຢຊູຍິ່ງໃຫຍ່ກວ່ານັ້ນອີກ.  ພຣະເຢຊູມີທ່າທີທີ່ກົງກັນຂ້າມ ພຣະອົງມີຣິດອຳນາດແທ້ຈິງ, ແລະນາຍຮ້ອຍທະຫານຮູ້ສຶກແນ່ໃຈວ່າລາວບໍ່ມີຄຸນຄ່າພໍທີ່ຈະໃຫ້ພຣະເຢຊູເຂົ້າໄປໃນເຮືອນຂອງລາວ.

ໃນຂະນະນີ້,  ນາຍຮ້ອຍທະຫານເຂົ້າໃຈຄວາມສຳຄັນກ່ຽວກັບຣິດອຳນາດ.  ລາວເຄີຍໃຫ້ຄຳສັ່ງແລະມີການເຊື່ອຟັງ ແລະດ້ວຍວິທີໃດກໍຕາມລາວຮູ້ວ່າພຽງແຕ່ພຣະເຢຊູອອກຄຳສັ່ງບາງສິ່ງກໍຈະເກີດຂຶ້ນ. ພຣະເຢຊູມີຣິດອຳນາດດັ່ງກ່າວຕລອດພຣະຣາຊກິດຂອງພຣະອົງ, ປະຊາຊົນພະຍາຍາມຈະເຂົ້າໃຈທັມມະຊາດແລະຂອບເຂດອຳນາດຂອງພຣະເຢຊູ:

- ກ່ອນທີ່ຈະພົບກັບນາຍທະຫານ, ພຣະເຢຊູໄດ້ເທສນາທີ່ເຮົາເອີ້ນວ່າຄຳເທສນາເທິງຈ້າຍພູ ເມື່ອພຣະອົງກ່າວພຣະຄຳເຫຼົ່ານີ້ຈົບລົງ, "ປະຊາຊົນທັງປວງກໍປລາດໃຈໃນການສັ່ງສອນຂອງພຣະອົງ ເພາະວ່າພຣະອົງຊົງສັ່ງສອນເຂົາເໝືອນຜູ້ມີຣິດອຳນາດ ແລະບໍ່ເໝືອນພວກນັກທັມຂອງເຂົາ "(ມັດທາຍ 7: 28-29).

- ໃນຕອນເລີ່ມຕົ້ນພຣະຣາຊກິດຂອງພຣະອົງ ພຣະເຢຊູຊົງຮັກສາຄົນທີ່ຖືກຜີສິງ ຝູງຊົນທັງໝົດທີ່ເປັນພະຍານໃນເຫດການນັ້ນກໍ " ປລາດໃຈ" ໃນຣິດອຳນາດຂອງພຣະອົງ ( ມາຣະໂກ 1: 23- 30 ).
- ຫລັງຈາກພຣະອົງຊົງຊຳຮະພຣະວິຫານ, ຜູ້ນຳທາງສາສນາຢາກຈະຮູ້ວ່າຜູ້ໃດທີ່ໃຫ້ສິດອຳນາດພຣະອົງເຮັດໃນສິ່ງນີ້ (ມັດທາຍ 21:23-27).
- ສິ່ງແລກທີ່ພຣະເຢຊູບອກກັບອັຄສາວົກຂອງພຣະອົງ ເໝືອນພຣະອົງໃຫ້ຄວາມຮັບຜິດຊອບທີ່ສຳຄັນທີ່ວ່າ, "ອຳນາດທັງໝົດໃນສວັນແລະທີ່ແຜ່ນດິນໂລກກໍດີຊົງມອບໃຫ້ແກ່ເຮົາແລ້ວ" ( ມັດທາຍ 28:18 ).

ພຣະເຢຊູບໍ່ຈຳເປັນທີ່ຈະເດີນທາງໄປບ້ານນາຍຮ້ອຍທະຫານ. ພຣະອົງມີອຳນາດຢ່າງຄົບຖ້ວນທີ່ພຣະອົງຈະໂຜດໃຫ້ຂ້ອຍໃຊ້ໃຫ້ຫາຍດີໃນຂະນະທີ່ພຣະອົງຢູ່ທີ່ນັ້ນ.

### 3. <u>ມັດທາຍ 8:10-13</u>:

*10ເມື່ອພຣະເຢຊູຊົງໄດ້ຍິນດັ່ງນັ້ນກໍປລາດພຣະທັຍ, ຈຶ່ງຊົງກ່າວກັບຄົນທັງຫລາຍທີ່ຕິດຕາມພຣະອົງມາວ່າ, "ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າແມ່ນໃນພວກອິສຣາເອນເຮົາກໍບໍ່ໄດ້ພົບຄວາມເຊື່ອໃຫຍ່ທໍ່ນີ້. 11ເຮົາບອກທ່ານທັງຫລາຍວ່າ ຈະມີຫລາຍຄົນຈາກທິດຕາເວັນອອກແລະທິດຕາເວັນຕົກມານັ່ງຮ່ວມໂຕະກັບອັບຣາຮາມ, ອີຊາກ, ແລະຢາໂຄບໃນແຜ່ນດິນສວັນ. 12ແຕ່ຝ່າຍຊາວແຜ່ນດິນນັ້ນຈະຖືກຖິ້ມອອກໄປໃນທີ່ມືດພາຍນອກ ທີ່ນັ້ນຈະມີສຽງຮ້ອງໄຫ້ແລະຂົບແຂ້ວຢູ່." 13ພຣະເຢຊູຊົງບອກແກ່ນາຍຮ້ອຍຜູ້ນັ້ນວ່າ,"ຈົ່ງກັບເມືອເສັຽ ທ່ານໄດ້ເຊື່ອຢ່າງໃດກໍໃຫ້ເປັນແກ່ທ່ານຢ່າງນັ້ນ" ແລ້ວໃນໂມງນັ້ນຄົນໃຊ້ຜູ້ນັ້ນກໍໄດ້ດີເປັນປົກກະຕິ.*

ນີ້ເປັນຖ້ອຍຄຳສະທ້ອນໃຫ້ເຫັນໂອກາດອັນສຳຄັນ:ນາຍຮ້ອຍທະຫານຕ່າງຊາດ ບໍ່ແມ່ນຜູ້ນຳສາສນາຢິວໄດ້ຍອມຮັບຣິດອຳນາດຂອງພຣະເຢຊູຄຣິດ. ເຮົາຈະເຫັນວ່າເວລານີ້ຜູ້ທີ່ບໍ່ເຊື່ອໄດ້ມີຄວາມເຊື່ອຫຼາຍກວ່າຄົນຢິວບາງຄົນ. ໃນການຢືນຢັນຄວາມເຊື່ອຂອງນາຍຮ້ອຍທະຫານ ພຣະເຢຊູຊີ້ໃຫ້ເຫັນຮູບພາບອັນດີໃນການຮັບເອົາຄວາມເຊື່ອ ແລະພຣະຄຸນ. ມະນຸດຈະມາຈາກທຸກເຊື້ອຊາດ, ຊົນຊັ້ນ, ພາສາ, ແລະຊົນຊາດທີ່ເຂົ້າຮ່ວມໃນງານລ້ຽງເພື່ອສລອງຄວາມພົ້ນອັນເມດຕາຂອງພຣະເຢຊູ ພຣະເມຊີອາ. ປະຊາຊົນເຫຼົ່ານີ້, ກໍມີຄວາມແຕກຕ່າງເມື່ອພົບເຫັນຄັ້ງແລກ. ຈະມີພຽງສິ່ງດຽວທີ່ຄືກັນແມ່ນ: ຄວາມເຊື່ອໃນພຣະເຢຊູຄຣິດ. ໜ້າປລາດໃຈທີ່, " ລູກໆ ຂອງຣາຊອານາຈັກຂອງພຣະເຈົ້າ" ທຸກຄົນທີ່ທ່ານຄາດວ່າຈະໄດ້ຮ່ວມໂຕະອາຫານ ແຕ່ກັບຖືກໂຍນອອກໄປທາງນອກ. ຖ້າປາສະຈາກຄວາມເຊື່ອ, ພວກເຂົາຈະບໍ່ມີບ່ອນທີ່ຈະຮ່ວມໂຕະໄດ້. ບໍ່ພຽງແຕ່ພວກເຂົາຖືກໂຍນອອກໄປຈາກໂຕະເທົ່ານັ້ນ ແຕ່ພວກເຂົາຍັງຈະຖືກໂຍນຖິ້ມອອກໄປຈາກພຣະພັກພຣະເຈົ້າດ້ວຍ.

ຄຳຖາມທີ່ຊັດເຈນແມ່ນ " ພວກເຮົາມີຄວາມເຊື່ອໃນພຣະເຢຊູຄຣິດເໝືອນກັບນາຍຮ້ອຍທະຫານບໍ່?" ພວກເຮົາບອກວ່າພວກເຮົາມີຄວາມເຊື່ອ, ແຕ່ຖ້ານັ້ນເປັນຄວາມຈິງ, ດ້ວຍເຫດໃດພວກເຮົາຫຼາຍຄົນດຳເນີນຊີວິດໃນຄວາມສິ້ນຫວັງແລະໝົດກຳລັງໃຈ? ຂ້າພະເຈົ້າຄິດວ່າເພາະເຮົາຂາດຄວາມເຊື່ອໝັ້ນ.

ຂໍໃຫ້ຂ້າພະເຈົ້າອະທິບາຍວ່າມີຄວາມໝາຍຢ່າງໃດ. ເຮັບເຣີບົດ 11 ເລີ່ມຕົ້ນດ້ວຍຄວາມເວົ້າດັ່ງນີ້:"ຄວາມເຊື່ອຄືຄວາມແນ່ນອນໃຈໃນສິ່ງທີ່ເຮົາຫວັງໄວ້ ເປັນຄວາມຕາຍໃຈເຖິງສິ່ງທີ່ຍັງບໍ່ເຫັນກັບຕາ" (ຂໍ້ 1) ຄວາມເຊື່ອມີຄວາມໝາຍຫຼາຍກວ່າຄວາມຄິດຄວາມປາຖນາ. ຊຶ່ງສະແດງເຖິງຄວາມເຊື່ອໝັ້ນຢ່າງໜັກແໜ້ນໃນພຣະເຢຊູຄຣິດຜູ້ທີ່ພຣະອົງເວົ້າວ່າພຣະອົງເປັນແລະສາມາດເຮັດສິ່ງທີ່ພຣະອົງເວົ້າ. ເມື່ອພວກເຮົາຍຶດຖືຄວາມເຊື່ອໝັ້ນດ້ວຍຄວາມໝັ້ນໃຈ, ເຮົາກໍສາມາດປ່ຽນແປງວິທີທາງການດຳລົງຊີວິດຂອງພວກເຮົາ. ເພາະພຣະຄຣິດເວົ້າວ່າພຣະອົງຍົກໂທດບາບພວກເຮົາແລະເສີມສ້າງເຮົາຂຶ້ນຊຶ່ງມີຄວາມໝາຍກັບຊີວິດຂອງເຮົາ. ພວກເຮົາເຊື່ອພຣະອົງ. ດັ່ງນັ້ນ, ພວກເຮົາຈຶ່ງດຳລົງຊີວິດຢູ່ໃນຄວາມຊົມຊື່ນຍິນດີໃນການໃຫ້ອະພັຍຂອງພຣະອົງແລະຕາມພຣະປະສົງຂອງພຣະອົງ.

ບັນຫາເຂົ້າມາເມື່ອພວກເຮົາເວົ້າວ່າເຮົາມີຄວາມເຊື່ອ, ແຕ່ພວກເຮົາລົ້ມເຫລວຕໍ່ການດຳລົງຊີວິດຕາມມາຕະ

ຖານຂອງຄວາມໝັ້ນໃຈ. ພວກເຮົາໃຫ້ຄວາມສຳຄັນຕໍ່ສິ່ງທີ່ເຮົາເລືອກໃນແຕ່ລະວັນ ແຕ່ແມ່ນຫຍັງທີ່ພາໃຫ້ເລືອກສິ່ງເຫຼົ່ານັ້ນ? ຄວາມຢ້ານກົວຕໍ່ຄ່ານິຍົມຂອງໂລກບໍ? ຄວາມໄວ້ໃຈໃນສິ່ງທີ່ຕາເຮົາເຫັນບໍ? ຫຼືຄວາມເຊື່ອໝັ້ນວ່າພຣະເຢຊູສາມາດເຮັດໄດ້ໃນສິ່ງທີ່ພຣະອົງເວົ້າວ່າພຣະອົງຈະເຮັດ?

ໃຫ້ເຮົາໄວ້ວາງໃຈໃນຣິດອຳນາດຂອງພຣະເຢຊູແລະມອບຄວາມເຊື່ອຂອງພວກເຮົາໄວ້ໃນພຣະອົງ. ນາຍຮ້ອຍທະຫານໄວ້ວາງໃຈພຣະຄຳຂອງພຣະເຢຊູເພາະລາວເຂົ້າໃຈວ່າຣິດອຳນາດທຳງານຢ່າງໃດ. ລາວໄວ້ວາງໃຈໃນພຣະເຢຊູ ແລະຄວາມສາມາດປິ່ນປົວຂອງພຣະອົງ. ຜົນປາກົດ, ລາວພົບຄວາມຫວັງສຳລັບຂ້ອຍໃຊ້ຂອງລາວແລະຄວາມຫວັງສຳລັບຕົວລາວເອງ. ພວກເຮົາສາມາດມີຄວາມຫວັງເໝືອນກັນ, ຄວາມຫວັງຊຶ່ງມາທາງຄວາມເຊື່ອ ຜ່ານທາງຄວາມໝັ້ນໃຈວ່າພຣະເຢຊູສາມາດເຮັດໃນສິ່ງທີ່ພຣະອົງເວົ້າວ່າພຣະອົງຈະເຮັດ.

## ນຳໃຊ້ໃນຊີວິດ.

**ທ່ານຈະສະແດງຄວາມເຊື່ອຂອງທ່ານຢ່າງໃດໃນອາທິດນີ້? ຈົ່ງພິຈາຣະນາເບິ່ງຄຳແນະນຳນີ້.**

- **ທົບທວນຄຳສັນຍາ.** ວິທີທາງດຽວທີ່ຈະເຫັນຣິດອຳນາດແລະຄວາມສາມາດຂອງພຣະເຈົ້າທຳງານໃນການປະພຶດຂອງທ່ານ ແມ່ນໃຫ້ເບິ່ງພຣະອົງທຳງານດັ່ງທີ່ເຫັນໃນພຣະຄັມພີ. ຈົ່ງພິຈາຣະນາເບິ່ງຈຳນວນຂອງວິຣະບຸຣຸດໃນປື້ມພຣະຄັມພີພາກພຣະສັນຍາເດີມແລະທົບທວນວ່າພຣະເຈົ້າເຮັດຫຍັງໃນຊີວິດຂອງເຂົາເຈົ້າ.
- **ທົບທວນເບິ່ງອະດີດຂອງທ່ານ.** ຈົດເປັນລຳດັບລາຍລະອຽດເຫດການສຳຄັນທີ່ເກີດຂຶ້ນໃນຊີວິດຂອງທ່ານໃນໄວໆນີ້. ໃຊ້ການຈົດລາຍລະອຽດນີ້ເປັນການສ້າງຄວາມເຊື່ອຂອງທ່ານໂດຍການອະທິຖານດ້ວຍວິທີທາງທີ່ແຕກຕ່າງ ພຣະເຈົ້າຊົງທຳງານຂອງພຣະອົງ.
- **ເອົາການປ່ຽນແປງໂດຍຮີບດ່ວນ.** ທູນຂໍພຣະເຈົ້າໃຫ້ທ່ານເປັນສ່ວນສຳຄັນສ່ວນນຶ່ງໃນຣາຊອານາຈັກຂອງພຣະອົງ. ຂໍເຂົ້າເປັນສ່ວນນຶ່ງຂອງ "ພາຊະນະທີ່ສຳຄັນຂອງພຣະເຈົ້າ" ເປັນສິ່ງນຶ່ງທີ່ສາມາດອະທິບາຍຄວາມຈິງວ່າແມ່ນພຣະອົງເປັນຜູ້ຊົງກະທຳ.

ພຣະເຈົ້າມີສິດອຳນາດທີ່ຈະເວົ້າ "ເພາະເຮົາຕັສເຊັ່ນນັ້ນ" ຕໍ່ທຸກຊີວິດໃນໂລກຈັກກະວານນີ້. ພຣະອົງມີສິດອຳນາດທີ່ຈະອວຍພອນໃນຊີວິດຂອງທ່ານດ້ວຍຄວາມຫວັງແລະຄວາມຊົມຊື່ນຍິນດີ. ຮັບເອົາຄວາມຈິງດ້ວຍຄວາມເຊື່ອໝັ້ນໃນການສແວງຫາພຣະອົງໃນຄວາມເຊື່ອ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**